## ທ່ານ ນາຍົກ ຕີລາຄາສູງການຮ່ວມມືລາວ-ໂມຣົກໂກ



*(ຂປລ): ທ່ານ ບົວສອນ ບຸບຜາວັນ, ນາຍົກລັດຖະ ມົນຕີແຫ່ງສປປ ລາວໄດ້ຕ້ອນຮັບການ ເຂົ້າຢ້ຽມ ຂໍ່ານັບອລາ ຂອງ ທ່ານ ເອລ ຮາຊານ ຊາຮິດ (EL Hassane Zahid), ເອກອັກຄະລັດຖະທູດຜູ້ມີອຳນາດ ເຕັມ ແຫ່ງ ປະເທດໂມຣົກໂກ ປະຈຳລາວຊຶ່ງມີສຳນັກງານ ສະຖານທູດຕັ້ງ ຢູ່ບາງກອກ ປະເທດໄທ, ໃນວັນທີ 9 ສິງຫາ 2010 ທີ່ສຳນັກງານ ນາຍົກລັດຖະມົນຕີ, ໃນໂອກາດ ທີ່ສຳເລັດໜ້າທີ່ການທູດຢູ່ ສປປ ລາວ ແຕ່ປີ 2002-2010. ທ່ານ ນາຍົກລັດຖະມົນຕີໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ ທ່ານ ເອລ ຮາຊານ ຊາຮິດ ທີ່ໄດ້ສຳເລັດໜ້າທີ່ ການທູດຢູ່ ລາວ ຊຶ່ງເປັນການປະກອບ ສ່ວນເຂົ້າໃນການ ຮັດແໜ້ນ ສາຍພົວພັນຮ່ວມມື ລະຫວ່າງ ລາວ-ໂມຣົກໂກ ໃຫ້ນັບມື້ ຂະຫຍາຍຕົວຍິ່ງຂຶ້ນ,ພ້ອມນີ້ທ່ານ ຍັງໄດ້ອວຍພອນໃຫ້ ທ່ານທູດເດີນທາງກັບປະເທດດ້ວຍຄວາມສະຫວັດດີພາບ ແລະ ປະຕິບັດໜ້າທີ່ໃໝ່ຂອງທ່ານ. ທ່ານ ເອກອັກຄະລັດຖະທູດ ໂມຣົກໂກ ກໍໄດ້ສະແດງຄວາມຂອບອົກຂອບໃຈມາຍັງ ລັດຖະບານ ແຫ່ງ ສປປ ລາວ ທີ່ໄດ້ໃຫ້ການຕ້ອນຮັບ ຢ່າງອົບອຸ່ນ ແລະ ໃຫ້ການຮ່ວມມືເປັນຢ່າງດີ ຈົນໄດ້ຮັບຜົນສຳເລັດ ຢ່າງຈົບງາມ. ສປປ ລາວ-ໂມຣົກໂກ ໄດ້ສ້າງຕັ້ງສາຍ ພົວພັນ ການທູດນຳກັນ ໃນວັນທີ 30 ມັງກອນ 1997 ມາຮອດ ປະຈຸ ບັນເຫັນວ່າມີ ທ່າກ້າວຂະຫຍາຍຕົວຢ່າງ ຕໍ່ເນື່ອງ ຊຶ່ງໄດ້ສະ ແດງອອກໃນການຊ່ວຍເຫລືອແກ່ ສປປ ລາວ ໃນວຽກງານການພັດ ທະນາຊັບພະຍາກອນມະນຸດໂດຍສະ ເພາະແມ່ນໄດ້ໃຫ້ ທຶນຊ່ວຍເຫລືອໃນການກໍ່ສ້າງອາຄານຮຽນ ຢູ່ທາງພາກ ເໜືອ ແລະພາກໃຕ້ ຂອງ ລາວ ມູນຄ່າເຖິງ 1 ແສນກວ່າໂດລາ ສະຫະລັດ. ນອກນີ້ກໍຍັງໄດ້ລົງນາມໃນ ແຜນການຮ່ວມນຳກັນ ດ້ານເສດຖະກິດ, ວິທະຍາສາດ-ເຕັກນິກ ແລະ ວັດທະນະທຳ.ໃນຕອນເຊົ້າວັນດຽວກັນ ທ່ານ ເອລ ຮາຊານ ຊາຮິດ (EL Hassane Zahid) ກໍໄດ້ເຂົ້າຢ້ຽມຂໍ່ານັບອຳລາ ທ່ານ ດຣ ທອງລຸນ ສີສຸລິດ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງການຕ່າງປະເທດ ທີ່ກະຊວງ ດັ່ງກ່າວ./.